**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພະແນກສາທາລະນະສຸກແຂວງອຸດົມໄຊ

ໂຮງໝໍແຂວງ

ອຸດົມໄຊ, ວັນທີ 13 MAR 2017..............

# ບົດລາຍງານ

## ການປິ່ນປົວຜ່າຕັດແປງໜັງຕາແລະ ຮູທໍ່ນໍ້າຕາອຸດຕັນ

## (Oculoplastic Surgery and Reconstructive)

## ທີ່ໂຮງໝໍແຂວງອຸດົມໄຊ



**9-13 ມັງກອນ, 2017**

ໂດຍການຮ່ວມມືລະຫວ່າງ

ໜ່ວຍງານຕາໂຮງໝໍແຂວງອຸດົມໄຊ

ກັບ

ໂຮງໝໍ ບຳລຸງລາດ, ເມດຕາປະຊາຮັກ, ນະຄອນປະຖົມ, ພູມິພົນ ອາດຸນຍະເດດ, ລັດນິນ ປະເທດໄທ

**Bumrungrad International, Mettapracharak, MaharajNakornrajsema, BhumibolAdulyadej, Rutnin Eye Hospitals, Thailand.**

ແລະ

ມູນນິທິຟື້ນຟູສຸຂະພາບລາວ ປະເທດອາເມລິກາ

Lao Rehabilitation Foundation Inc., USA

ສະພາບຕາບອດ ແລະ ສາຍຕາພິການ ຍັງເປັນບັນຫາສຳຄັນຢ່າງໜຶ່ງ ຂອງວຽກງານສາທາລະນະສຸກ ຊຶ່ງສ້າງຄວາມເຈັບປວດໃຫ້ແກ່ຜູ້ກ່ຽວເອງ ແລະ ສ້າງຜົນກະທົບຕໍ່ຄອບຄົວ ກໍຄືການພັດທະນາເສດຖະກິດຂອງຊາດ ໂດຍສະເພາະຢູ່ພາກເໜືອຂອງລາວ ໃນນັ້ນມີແຂວງອຸດົມໄຊ ນຳອີກ.

ສາຍເຫດສ່ວນໃຫຍ່ ແມ່ນພະຍາດແກ່ນຕາຊຸ້ນ, ສະເພາະພະຍາດໜັງຕາຜິດປົກກະຕິ ທີ່ເກີດຈາກ ອຸບັດເຫດ, ຈາກສັດກັດ, ຈາກຄວາມຜິດປົກກະຕິຂອງໜັງຕາ ກໍເປັນສາຍເຫດທີ່ພົບຫຼາຍ ທີ່ພາໃຫ້ຕາບອດໄດ້, ຄວາມຈິງແລ້ວ ຍັງມີຄົນເຈັບຈຳນວນຫຼາຍ ທີ່ມີບັນຫາຮຸນແຮງທາງໜັງຕາ ຍ້ອນອຸບັດເຫດ, ສັດປ່າກັດ, ໜັງຕາຍານ ແລະ ອື່ນໆ ທີ່ພາໃຫ້ຕາບອດ ຍ້ອນບໍ່ໄດ້ຮັບການປິ່ນປົວ ຄົນເຈັບສ່ວນໃຫຍ່ແມ່ນດຳລົງຊີວິດ ຢູ່ ເຂດຊົນນະບົດ ບ່ອນຫ່າງໄກສອກຫຼີກ ແລະ ຄອບຄົວທຸກຍາກ ບໍ່ມີຄວາມສາມາດ ໄປປິ່ນປົວຢູ່ບ່ອນທີ່ມີ ເງື່ອນໄຂ, ອີກຢ່າງໜຶ່ງ ປະຈຸບັນຢູ່ໜ່ວຍງານຕາ ໂຮງໝໍແຂວງອຸດົມໄຊ ກໍຄືພາກເໜືອຂອງລາວ ຍັງຂາດຊ່ຽວຊານ ສະເພາະທາງ ໂດຍສະເພາະ specialist oculoplasty.

ເລີ່ມແຕ່ປີ 2008 ໂດຍການຮ່ວມມືລະຫວ່າງມູນນິທິ LRF ແລະ ໂຮງໝໍເມດຕາປະຊາຮັກ ຂອງປະເທດໄທ ໄດ້ໃຫ້ການຊ່ວຍເຫຼືອຟື້ນຟູຊີບ ເດັກຊາຍ 1 ຄົນ ຈາກແຂວງຫຼວງນໍ້າທາ ທີ່ມີແຜຮຸນແຮງຈາກຟ້າຜ່າ ໂດຍຮັບການຜ່າຕັດແປງໜັງຕາ ແລະ ປ່ຽນແກ້ວຕາ.

ຕໍ່ມາ ປີ 2011, 2013 ໄດ້ມີການປະສານງານຮ່ວມມືລະຫວ່າງໜ່ວຍງານຕາ ໂຮງໝໍແຂວງອຸດົມໄຊ ກັບທີມງານຈາກ ໂຮງໝໍເມດຕາປະຊາຮັກ, ບໍາລຸງລາດ, ນະຄອນປະຖົມ ປະເທດໄທ ໄດ້ດຳເນີນການ ບໍລິການຜ່າຕັດແປງໜັງຕາ ແລະ ຜ່າຕັດຮູທໍ່ນໍ້າຕາອຸດຕັນ ຢູ່ທີ່ໂຮງໝໍແຂວງອຸດົມໄຊ ຫຼາຍກວ່າ 30 ກໍລະນີ ຊຶ່ງໄດ້ຊ່ວຍເຫຼືອຄົນເຈັບ ຈຳນວນຫຼາຍ ທີ່ດ້ອຍໂອກາດ ແລະ ປະສົບຜົນສຳເລັດເປັນຢ່າງດີ, ເຖິງຢ່າງໃດກໍຕາມຍັງມີຄົນເຈັບ ຈຳນວນຫຼາຍ ທີ່ຍັງລໍຖ້າຮັບການປິ່ນປົວ.

ກິດຈະກຳຄັ້ງນີ້ ເປັນຄັ້ງທີ່ 3 ໃນການຜ່າຕັດແປງໜັງຕາ ແລະ ຜ່າຕັດແປງຮູທໍ່ນໍ້າຕາອຸດຕັນ ຢູ່ໂຮງໝໍແຂວງອຸດົມໄຊ, ຊຶ່ງເປັນຄັ້ງທຳທິດຂອງປະເທດລາວ ທີ່ໄດ້ມີການຜ່າຕັດຮູທໍ່ນໍ້າຕາອຸດຕັນດ້ວຍເຕັກນິກ ແລະ ເຄື່ອງມື Endo DCR. ຊຶ່ງໄດ້ຮັບທຶນສະໜັບສະໜູນຈາກບັນດາທ່ານໝໍຈາກຫຼາຍໂຮງໝໍ ທີ່ປະເທດໄທ ຮ່ວມກັບມູນນິທິ LRF

## I. ຈຸດປະສົງ

- ຊ່ວຍຮັກສາ ແລະ ຟື້ນຟູສຸຂະພາບຕາຂອງຄົນ ໃຫ້ມີປະສິດທິພາບ ແລະ ມີຊີວິດດີຂຶ້ນ.
- ພັດທະນາຖອດຖອນບົດຮຽນທາງດ້ານວິຊາການ ທັງເປັນການຮ່ວມມືລະຫວ່າງ ໂຮງໝໍແຂວງອຸດົມໄຊ ແລະ ໂຮງໝໍຈາກປະເທດໄທ.

## II. ວັນເວລາ ແລະ ສະຖານທີ່

ໃຊ້ເວລາທັງໝົດ 5 ວັນ, ແຕ່ວັນທີ່ 9-13 ມັງກອນ 2017. ຈັດຂຶ້ນ ທີ່ໂຮງໝໍແຂວງອຸດົມໄຊ ປະເທດລາວ.

## III. ທີມງານຈັດຕັ້ງປະຕິບັດ

ທີມງານທັງໝົດ ລວມ 25 ຄົນ, ປະກອບມີ:

1. <u>ຈາກໂຮງໝໍແຂວງອຸດົມໄຊ(11)</u>
   - ແພດຕາຫຼັງມະຫາ 2 ທ່ານ
   - ແພດວາງຢາສະຫຼົບ 2 ທ່ານ
   - ພະຍາບານຊ່ວຍຜ່າຕັດ ແລະ ຟື້ນຟູຫຼັງຜ່າຕັດ 3 ທ່ານ
   - ພະຍາບານຕາ 4 ທ່ານ

2. <u>ຈາກໂຮງໝໍເມດຕາປະຊາຮັກ ປະເທດໄທ (12)</u>
   - Oculoplastic Surgeon 3 ທ່ານ
   - Oculoplastic Fellow 1 ທ່ານ
   - Glaucoma, Cataract Specialist 1 ທ່ານ
   - Pediatric Ophthalmologist 1 ທ່ານ
   - Ophthalmologist 1 ທ່ານ
   - Medical Doctor 1 ທ່ານ
   - Medical Volunteer 1 ທ່ານ
   - Nurse Practitioner 2 ທ່ານ
   - Technician 1 ທ່ານ

3. <u>ຈາກມູນນິທິຟື້ນຟູສຸຂະພາບ(LRF), USA (2)</u>
   - ປະທານມູນນິທິ 01 ທ່ານ
   - ຜູ້ປະສານງານ (ນາຍພາສາ) 01 ທ່ານ

## IV. <u>ເຄື່ອງມືອຸປະກອນຮັບໃຊ້</u>

ອຸປະກອນເຄື່ອງມືອຸປະກອນ ແລະ ຢາ, ປະກອບມີ:

1. ເຄື່ອງມືອຸປະກອນ ແລະ ຊຸດຜ່າຕັດ (ນຳມາຈາກປະເທດໄທ)
2. ເຄື່ອງມື ແລະ ຢາ ວາງຢາສະຫຼົບ ແມ່ນນຳໃຊ້ ຢູ່ໂຮງໝໍແຂວງ.

## V. <u>ຄະນະຮັບຜິດຊອບ</u>

1. <u>ພະແນກສາທາລະນະສຸກແຂວງອຸດົມໄຊ ແລະ ໂຮງໝໍແຂວງ</u>
   ຮັບຜິດຊອບດ້ານເອກະສານຂໍອະນຸມັດຈາກກະຊວງສາທາລະນະສຸກ , ກະຊວງການຕ່າງປະເທດ, ການກະກຽມ ສະຖານທີ່, ຄົນເຈັບ ແລະ ທີມງານຜູ້ຮ່ວມງານ.

2. <u>ທີມງານແພດ ຈາກປະເທດໄທ</u>
   - ຮັບຜິດຊອບຄ່າເດີນທາງ, ອັດຕາກິນຢູ່ພັກເຊົາ, ຂອງທີມງານ ຊ່ຽວຊານ ທີ່ມາຈາກປະເທດໄທ.
   - ຮັບຜິດຊອບເຄື່ອງມືອຸປະກອນ, ຢາ, ໃນເວລາດຳເນີນການປິ່ນປົວຜ່າຕັດຄົນເຈັບ.
   - ຮັບຜິດຊອບຄ່າໃຊ້ຈ່າຍການກວດຄົນເຈັບກ່ອນຜ່າຕັດ ແລະ ດູແລຄົນເຈັບຫຼັງຜ່າຕັດ.

3. <u>ມູນນິທິຟື້ນຟູສຸຂະພາບລາວ(LRF)</u>

- ຮັບຜິດຊອບຄ່າຢາ ແລະ ອຸປະກອນນຳໃຊ້ ວາງຢາສະຫຼົບ ສຳລັບຄົນເຈັບທີ່ໄດ້ຮັບການວາງຢາສະຫຼົບໃນເວລາຜ່າຕັດ.
- ຮັບຜິດຊອບຄ່າໃຊ້ຈ່າຍການກວດບາງຄົນເຈັບກ່ອນ ແລະ ຫຼັງຜ່າຕັດ

## VI. <u>ວິທີການຈັດຕັ້ງປະຕິບັດ</u>

- ໄດ້ຊອກຫາ ແລະ ລົງທະບຽນເກັບກຳຄົນເຈັບເປັນເວລາ 1 ປີ.
- ທີມງານແພດລາວ ປະກອບມີ ທ່ານໝໍຕາ, ຢາສະຫຼົບ, ແພດຊ່ວຍ ໄດ້ຮ່ວມງານກັບແພດຊ່ຽວຊານຈາກປະເທດໄທ ແລະ LRF ໃນການກວດ ແລະ ປິ່ນປົວ ພະຍາດໜັງຕາ, ຮູທໍ່ນ້ຳຕາອຸດຕັນ ແລະ ກ້ອນເນື້ອບໍລິເວນຕາ. ທີມງານໄດ້ກວດຄົນເຈັບທັງໝົດທີ່ໄດ້ຮັບການລົງທະບຽນ ແລະ ມີຄົນເຈັບໃໝ່ຈຳນວນໜຶ່ງ, ພ້ອມກັບໃຫ້ການບໍລິການບໍ່ໄດ້ເສຍຄ່າແກ່ຄົນເຈັບໝົດທຸກຄົນ.
- ການກວດ ແລະ ຜ່າຕັດ ແມ່ນຈັດຕັ້ງປະຕິບັດໂດຍແພດຊ່ຽວຊານຕາໄທ ແລະ ທ່ານໝໍຕາລາວ ດ້ວຍເຕັກນິກ ແລະ ເຄື່ອງມືພື້ນຖານ ແລະ ທັນສະໄໝ.
- ໄດ້ແບ່ງຄົນເຈັບເປັນ 2 ກຸ່ມໃນການວາງຢາສະຫຼົບ ແລະ ໃສ່ຢາມືນກັບທີ່.
- ການປິ່ນປົວ ໄດ້ສະໜອງຢາ ທີ່ດີ ແລະ ການຜ່າຕັດດ້ວຍເຕັກນິກ:
    - ຮູທໍ່ນ້ຳຕາອຸດຕັນທັງໝົດ ແມ່ນໄດ້ຮັບການຜ່າຕັດດ້ວຍເຕັກນິກ Endo DCR ແລະ ບາງກໍລະນີ ແມ່ນດ້ວຍເຕັກນິກ External DCR.
    - ໄດ້ຜ່າຕັດແປງພະຍາດໜັງຕາຮຸນແຮງດ້ວຍເຕັກນິກ ແລະ ເຄື່ອງມືນຳໃຊ້ທີ່ດີ.
    - ໄດ້ຜ່າຕັດເອົາກ້ອນເນື້ອອອກຈາກໜັງຕາ, ແກ້ມ ໃຫ້ແກ່ຄົນເຈັບບາງຄົນ.

- ທ່ານໝໍຕາລາວ (ອຸດົມໄຊ) ໄດ້ຕິດຕາມຮໍ່າຮຽນເຕັກນິກຜ່າຕັດ
- ກວດກາຜົນຫຼັງຜ່າຕັດພ້ອມຕິດຕາມ ຄົນເຈັບຫຼັງຜ່າຕັດ ໂດຍການປະສານງານ ແລະ ລາຍງານຄວາມຄືບໜ້າຂອງຄົນເຈັບແຕ່ລະໄລຍະ.

## VII. <u>ຜົນຂອງການຈັດຕັ້ງປະຕິບັດ</u>

ຄົນເຈັບທີ່ມາລົງທະບຽນທັງໝົດ: 41 ຄົນ, ໄດ້ກວດຄົນເຈັບທັງໝົດ: 39 ຄົນ, ໄດ້ຮັບການຜ່າຕັດ ຕົວຈິງ 35 ກໍລະນີ (ຍິງ 23), ໃນນັ້ນ ປະກອບມີ:

- ພະຍາດໜັງຕາຮຸນແຮງ: 3 ກໍລະນີ.
- ໜັງຕາຕົກ: 7 ກໍລະນີ
- ແຜງໜັງຕາທົ່ວໄປ: 9 ກໍລະນີ.
- ຮູທໍ່ນ້ຳຕາອຸດຕັນ: 11 ກໍລະນີ
- ຕາເລ: 2 ກໍລະນີ
- ກ້ອນເນື້ອໜັງຕາ: 3 ກໍລະນີ

ຄົນເຈັບຫຼັງຜ່າຕັດທັງໝົດ ແມ່ນໄດ້ຮັບຜົນດີ ແລະ ບໍ່ມີອາການສົນ.

1 ໃນ 3 ກໍລະນີ ກ້ອນເນື້ອ ເປັນມະເຮັງ ຈາກຜົນການກວດ Pathology, ຊຶ່ງຍັງພິຈາລະນາຫາທາງປິ່ນປົວຕໍ່ໄປ.

## VIII. ງົບປະມານ ແລະ ລາຍຈ່າຍ

ລາຍຈ່າຍຕົວຈິງ: **9,958** (ເກົ້າພັນເກົ້າຮ້ອຍຫ້າສິບແປດໂດລາສະຫະລັດ)

ໂດຍທຶນສະໜັບສະໜູນ ຈາກ:

1. ບັນດາທ່ານໝໍຈາກໂຮງໝໍ ບຳລຸງລາດ, ເມດຕາປະຊາຮັກ, ນະຄອນລາດສະສີມາ, ພູມິພົນອາດຸຍະເດດ ແລະ ໂຮງໝໍລັດນິນ ປະເທດໄທ: 6,035 USD
2. ມູນນິທິ LRF: 3,923 USD

**ປະກອບມີ:**

| | |
|---|---|
| – ອຸປະກອນ ແລະ ຢາ | 2,372 USD |
| – ກະກຽມກ່ອນ-ໃນເວລາດຳເນີນ ແລະ ຫຼັງຜ່າຕັດ | 1,670 USD |
| – ການເດີນທາງຂອງທີມງານ | 2,942 USD |
| – ທີ່ພັກ ໂຮງແຮມ/ບ້ານພັກ | 1,025 USD |
| – ອາຫານ ແລະ ເຄື່ອງດື່ມ | 1,329 USD |
| – ອື່ນ | 620 USD |

(ລາຍລະອຽດເອກະສານຂັດທ້າຍ)

## IX. ຈຸດດີ, ຈຸດອ່ອນ ແລະ ຂໍ້ຄົງຄ້າງ

### 1. ຈຸດດີ

- ໄດ້ຮັບການຮ່ວມມືເປັນຢ່າງດີ ທຸກພາກສ່ວນ ລະຫວ່າງໂຮງໝໍແຂວງອຸດົມໄຊ, ກັບໂຮງໝໍ ບຳລຸງລາດ, ເມດຕາປະຊາຮັກ, ຈະເລີນກຸງຊາຮັກ ແລະ ມູນນິທິ ຟື້ນຟູສຸຂະພາບລາວ.
- ເປັນທີມງານໃຫຍ່ຄົບຊຸດທີ່ໄດ້ຊ່ວຍເຫຼືອຄົນເຈັບເຮັດໃຫ້ຄົນເຈັບຜູ້ທີ່ດ້ອຍໂອກາດ ໄດ້ຮັບການປິ່ນປົວ ແລະ ຟື້ນຟູຊີວິດໃຫ້ດີຂື້ນ.
- ໄດ້ໃຫ້ການຊ່ວຍເຫຼືອຄົນເຈັບທີ່ເປັນພະຍາດໜັງຕາຮຸ່ນແຮງ ໄດ້ຮັບການປິ່ນປົວ
- ສ້າງຜົນປະໂຫຍດອັນສຳຄັນໃຫ້ແກ່ ປະເທດຊາດ ໃນວຽກງານປ້ອງກັນຕາບອດ.
- ເປັນການຖອດຖອນບົດຮຽນຄວາມຮູ້ ດ້ານເຕັກນິກໃນການກວດ, ການປິ່ນປົວ ແລະ ການຜ່າຕັດ ພະຍາດໜັງຕາ ແລະ ຮູທໍ່ນໍ້າຕາອຸດຕັນ ກັບຊ່ຽວຊານຈາກປະເທດໄທ.

### 2. ຈຸດອ່ອນ ແລະ ຂໍ້ຄົງຄ້າງ

- ທີມງານເສຍເວລາຫຼາຍ ໃນການເດີນທາງ (ຫຼວງພະບາງ-ອຸດົມໄຊ-ຫຼວງພະບາງ) ສູນເສຍເວລາເຖິງ 2 ວັນ.

### 3. ຂໍ້ສະເໜີ

- ເພີ່ມເວລາໃນການຈັດຕັ້ງປະຕິບັດ.

## X. ແຜນການໃນຕໍ່ໜ້າ

### 1. ກິດຈະກຳ

- ຜ່າຕັດແປງໜັງຕາ
- ຜ່າຕັດຮູທໍ່ນ້ຳຕາອຸດຕັນ ດ້ວຍເຕັກນິກ Endo and external DCR
- Cataract surgery ດ້ວຍເຄື່ອງມື Phaco
- ສິດສອນເຕັກນິກກັບທີ່ໃຫ້ແກ່ແພດຕາລາວ

### 2. ສະຖານທີ່

ທີ່ໂຮງໝໍແຂວງອຸດົມໄຊ ຫຼື ຫຼວງພະບາງ

### 3. ໄລຍະເວລາ

ໃນ ປີ2018, ຊຶ່ງຍັງ ຮັບພິຈາລະນາຂອງທີມງານແພດ

**ຜູ້ອຳນວຍການໂຮງໝໍແຂວງ**

ດຣ. ຄຳພັນ ໄຊຍະວົງ

Dr Khamphan XAYAVONG

**ຜູ້ລາຍງານ**

ດຣ. ເພັດສະໝອນ ອິນດາລາ

Phetsamone INDARA, MD.

# <u>ເອກະສານຊັດຕິດ</u>